ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4266 /ກປ

ນະຄອນຫຼວງວຽງຈັນ, ວັນທີ 07 OCT 2022

# ຄຳສັ່ງ
## ກ່ຽວກັບ ການສ້າງແຜນການຂຸດຄົ້ນ, ຄຸ້ມຄອງ ການ ຊື້-ຂາຍ, ການເຄື່ອນຍ້າຍ ແລະ ສົ່ງອອກ ເຄື່ອງປ່າຂອງດົງ

**ເຖິງ:** - ທ່ານ ຫົວໜ້າ ກົມປ່າໄມ້;
- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປ່າໄມ້ ສະບັບເລກທີ 5551/ກປມ, ລົງວັນທີ 07 ກັນຍາ 2022.

ເພື່ອຮັບປະກັນ ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ການສ້າງແຜນການຂຸດຄົ້ນ, ຄຸ້ມຄອງ ການ ຊື້-ຂາຍ, ການເຄື່ອນຍ້າຍ ແລະ ສົ່ງອອກ ເຄື່ອງປ່າຂອງດົງ ໃຫ້ມີຄວາມເຂັ້ມງວດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ການຂຸດຄົ້ນເຄື່ອງປ່າຂອງດົງ ອະນຸຍາດ ໃຫ້ດຳເນີນການ ໃນເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດຄຸ້ມຄອງການນຳໃຊ້ ໃນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ເຂດເນື້ອທີ່ດິນຂອງ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ໃນເຂດປ່າຊົມໃຊ້ຂອງບ້ານ ທີ່ລັດຈັດສັນໃຫ້. ນອກຈາກນີ້, ການຂຸດຄົ້ນເຄື່ອງປ່າຂອງດົງ ແຕ່ລະຊະນິດ ຕ້ອງປະຕິບັດຕາມແຜນການທີ່ໄດ້ອະນຸມັດ, ເຂດທີ່ໄດ້ອະນຸຍາດ, ຕາມມາດຕະຖານເຕັກນິກ ແລະ ຮັບປະກັນຄວາມຍືນຍົງ;
2. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ, ກວດກາ ແຜນການຂຸດຄົ້ນ ແລະ ເກັບກູ້ເຄື່ອງປ່າຂອງດົງ ທີ່ໄດ້ຮັບການອະນຸມັດ ປະຈຳປີ ເພື່ອປະເມີນຕີລາຄາ ສະພາບການຂຸດຄົ້ນ ແລະ ເກັບກູ້ຕົວຈິງ ແລ້ວລາຍງານກະຊວງກະສິກຳ ແລະ ປ່າໄມ້;
3. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສ້າງແຜນການຂຸດຄົ້ນ ເຄື່ອງປ່າຂອງດົງ ດັ່ງນີ້:
   3.1 ການສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ໃຫ້ອີງໃສ່ ຜົນການສຳຫຼວດ ເກັບກຳຂໍ້ມູນທາງດ້ານຊະນິດພັນ ແລະ ຈຳນວນເຄື່ອງປ່າຂອງດົງ ທີ່ມີຢູ່ໃນເຂດອະນຸຍາດ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 1 ຂອງຄຳສັ່ງສະບັບນີ້ ແລ້ວສັງລວມ ເຂົ້າໃນແຜນການຂຸດຄົ້ນ ປະຈຳປີ ຂອງແຂວງ, ນະຄອນຫຼວງວຽງຈັນ. ພ້ອມດຽວກັນນີ້ ຖ້າບໍ່ມີການສຳຫຼວດ ແລະ ເຂດຈະດຳເນີນການຂໍອະນຸຍາດ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ບໍ່ໄປຕາມ ຂໍ້ 1 ແລະ 3.3 ຂອງຄຳສັ່ງສະບັບນີ້ ແມ່ນບໍ່ໃຫ້ສັງລວມເຂົ້າແຜນການ ສະເໜີຂໍອະນຸຍາດໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ປະຈຳປີ; ໑໔

3.2 ການສະເໜີຂໍໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ແມ່ນໃຫ້ປະຕິບັດເປັນປີຕໍ່ປີ ບໍ່ໃຫ້ຍົກເອົາໂກຕ້າຄ້າງຈາກປີຜ່ານມາ ໄປຈັດຕັ້ງປະຕິບັດ ແລະ ເອົາເຂົ້າແຜນຂໍໂກຕ້າໃນປີຕໍ່ໄປ;

3.3 ການສຳຫຼວດເຄື່ອງປ່າຂອງດົງ ເພື່ອສະເໜີແຜນການຂຸດຄົ້ນ ແລະ ເກັບກູ້ ປະຈຳປີ ໃຫ້ປະຕິບັດຕາມ ມາດຕາ 25 ຂອງກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ແລະ ການສຳຫຼວດເຄື່ອງປ່າຂອງດົງ ແຕ່ລະຄັ້ງ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງໄດ້ມີຂະແໜງການສາທາລະນະສຸກ ຂັ້ນແຂວງ ແລະ ຂັ້ນເມືອງ ເຂົ້າຮ່ວມນຳ;

3.4 ເຄື່ອງປ່າຂອງດົງ ທີ່ນອນໃນບັນຊີ I ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ປະສານສົມທົບກັບ ພະແນກສາທາລະນະສຸກຂັ້ນແຂວງ ກວດກາ ຂໍ້ມູນທີ່ກ່ຽວຂ້ອງ, ແຫຼ່ງທີ່ມາຈະຂຸດຄົ້ນ, ແຍກລະອຽດເຄື່ອງປ່າຂອງດົງທີ່ເປັນຢາ ແລະ ເປັນເອກະພາບກັນແລ້ວ ຈຶ່ງນຳສະເໜີ ຫາ ກົມປ່າໄມ້ ເພື່ອນຳສະເໜີການນຳ ກະຊວງກະສິກຳ ແລະ ປ່າໄມ້ ບໍ່ໃຫ້ກາຍວັນທີ 30 ກັນຍາ ຂອງທຸກໆປີ;

3.5 ເຄື່ອງປ່າຂອງດົງ ທີ່ນອນໃນບັນຊີ II ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ປະສານສົມກັບ ພະແນກສາທາລະນະສຸກຂັ້ນແຂວງ ກວດກາ ຂໍ້ມູນທີ່ກ່ຽວຂ້ອງ, ແຫຼ່ງທີ່ມາຈະຂຸດຄົ້ນ, ແຍກລະອຽດເຄື່ອງປ່າຂອງດົງທີ່ເປັນຢາ ແລະ ເປັນເອກະພາບກັນແລ້ວ ຈຶ່ງສະເໜີ ຫາ ອົງການປົກຄອງແຂວງ ແລະ ນະຄອນຫຼວງວຽງຈັນ ພິຈາລະນາ ອະນຸຍາດ ໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ປະຈຳປີ ຕາມທີ່ກຳນົດໄວ້ໃນ ຂໍ້ 2 ມາດຕາ 27 ຂອງກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ). ບົນພື້ນຖານການເຫັນດີ ຂອງອົງການປົກຄອງແຂວງ ແລະ ນະຄອນຫຼວງວຽງຈັນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຈຶ່ງອອກແຈ້ງການອະນຸມັດແຜນການຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ປະຈຳປີ ພາຍໃນແຂວງ ແລະ ນະຄອນຫຼວງວຽງຈັນ ບໍ່ໃຫ້ກາຍ ເດືອນທັນວາ ຂອງແຕ່ລະປີ;

3.6 ເຄື່ອງປ່າຂອງດົງ ທີ່ນອນໃນບັນຊີ III ບໍ່ຈຳເປັນຕ້ອງຂໍອະນຸຍາດຂຸດຄົ້ນ, ໝາຍຄວາມວ່າ ປະຊາຊົນ ສາມາດເກັບກູ້ໄດ້ ຕາມລະດູການ ແຕ່ຕ້ອງຮັບປະກັນຄວາມຍືນຍົງ ຕາມທີ່ກຳນົດໄວ້ໃນ ຂໍ້ 3 ມາດຕາ 27 ຂອງກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ);

3.7 ເຄື່ອງປ່າຂອງດົງ ເປັນຢາທີ່ປູກ ຊຶ່ງໄດ້ຂຶ້ນທະບຽນຖືກຕ້ອງແລ້ວ ສາມາດເກັບກູ້ໄດ້ ໂດຍບໍ່ຈຳເປັນຂໍອະນຸຍາດຕາມຂັ້ນຕອນທາງດ້ານວິຊາການ.

4. ໃຫ້ ກົມປ່າໄມ້ ເປັນເຈົ້າການ ສັງລວມ ການນຳສະເໜີ ໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ຂອງພະແນກກະສິກຳ ແລະ ປ່າໄມ້ ແຕ່ລະແຂວງ ກ່ອນຈະນຳສະເໜີ ຫາ ການນຳກະຊວງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ດຳເນີນການຈັດກອງປະຊຸມປຶກສາຫາລື ຮ່ວມກັບ ກົມທີ່ກ່ຽວຂ້ອງຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມທີ່ກ່ຽວຂ້ອງຂອງກະຊວງສາທາລະນະສຸກ ເພື່ອຄວາມເປັນເອກະພາບ ແຍກລະອຽດ ປະເພດເຄື່ອງປ່າຂອງດົງ ທີ່ເປັນຢາ, ຕາມລະດູການ ແລະ ປະເພດອື່ນໆ ເຊັ່ນ: ໄມ້ປ່ອງ, ຫວາຍ ແລະ ອື່ນໆ ທີ່ນອນໃນບັນຊີເຄື່ອງປ່າຂອງດົງ; ຈາກນັ້ນ, ຕ້ອງໄດ້ດຳເນີນການ ຂໍຄຳເຫັນທາງການ ຫາ ກະຊວງສາທາລະນະສຸກ ກ່ອນຈະນຳສະເໜີ ຫາ ລັດຖະບານ ເພື່ອຂໍອະນຸຍາດ ໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ປະຈຳປີ ບໍ່ໃຫ້ກາຍ ເດືອນທັນວາ ຂອງແຕ່ລະປີ;

5. ພາຍຫຼັງໄດ້ຮັບ ຂໍອະນຸຍາດ ໂກຕ້າ ຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ປະຈຳປີ ໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ຈັດບູລິມະສິດ ໃນການອອກອະນຸຍາດຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ໃຫ້ ບໍລິສັດ/ໂຮງງານ ທີ່ຕັ້ງຢູ່ ຫຼື ດຳເນີນການຜະລິດ ຢູ່ພາຍໃນແຂວງຂອງຕົນກ່ອນ. ພ້ອມນີ້ໃຫ້ ນຳສະເໜີ ອົງການປົກຄອງແຂວງ ແລະ ນະຄອນຫຼວງວຽງຈັນ ແຕ່ງຕັ້ງຄະນະຮັບຜິດຊອບ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ເປັນອັນສະເພາະ ເພື່ອຮັບປະກັນ ແລະ ຫຼີກເວັ້ນ ບໍ່ໃຫ້ມີການຂຸດຄົ້ນນອກເຂດອະນຸຍາດ;

6. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ການ ຊື້-ຂາຍ, ການເຄື່ອນຍ້າຍ ແລະ ການສົ່ງອອກ ເຄື່ອງປ່າຂອງດົງ ດັ່ງນີ້: ໑-໓໒

6.1 ບໍລິສັດ/ໂຮງງານ ທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນການຂຸດຄົ້ນ ແລະ ເກັບກູ້ ເຄື່ອງປ່າຂອງດົງ ປະຈໍາປີ ແມ່ນສາມາດດໍາເນີນການ ຊື້-ຂາຍ ເຄື່ອງປ່າຂອງດົງ ທົ່ວໄປ ຫຼື ຂາຍໃຫ້ໂຮງງານປຸງແຕ່ງ ທີ່ໄດ້ມາດຕະຖານ ຢູ່ພາຍໃນປະເທດ;

6.2 ການເຄື່ອນຍ້າຍເຄື່ອງປ່າຂອງດົງ ບັນຊີ I ແລະ ບັນຊີ II ຕ້ອງໄດ້ຂໍອະນຸຍາດນໍາພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ. ສໍາລັບ ບັນຊີ III ຕ້ອງໄດ້ຂໍອະນຸຍາດນໍາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ນະຄອນ;

6.3 ການເຄື່ອນຍ້າຍເຄື່ອງປ່າຂອງດົງ ທີ່ເປັນຢາ ຍັງຕ້ອງໄດ້ຂໍອະນຸຍາດນໍາ ພະແນກສາທາລະນະສຸກ ແຂວງ ແລະ ນະຄອນຫຼວງວຽງຈັນ ຕື່ມ ຈຶ່ງສາມາດເຄື່ອນຍ້າຍໄດ້;

6.4 ການສົ່ງອອກເຄື່ອງປ່າຂອງດົງ ແມ່ນອະນຸຍາດໃຫ້ ແຕ່ສະເພາະແຕ່ຊະນິດທີ່ບໍ່ສາມາດປຸງແຕ່ງ ຢູ່ພາຍໃນ ແລະ ຊະນິດທີ່ບໍ່ຫວງຫ້າມ. ນອກຈາກນີ້, ການສົ່ງອອກຕ້ອງໄດ້ປະຕິບັດຕາມ ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

7. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການໂຄສະນາເຜີຍແຜ່ບັນດາ ນະໂຍບາຍ, ກົດໝາຍ, ດໍາລັດ, ລະບຽບການ ກ່ຽວກັບ ການຂຸດຄົ້ນ, ການເຄື່ອນຍ້າຍ, ການຊື້-ຂາຍ ແລະ ສົ່ງອອກ ເຄື່ອງປ່າຂອງດົງ ໂດຍຜ່ານສື່ຕ່າງໆ ເປັນຕົ້ນ ໜັງສືພິມ, ໂທລະພາບ, ວິທະຍຸ ແລະ ສື່ອອນລາຍຕ່າງໆ ຕາມຄວາມເໝາະສົມ;

8. ມອບໃຫ້ ກົມກວດກາປ່າໄມ້ ປະສານສົມທົບ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ (ກອງກວດກາປ່າໄມ້) ກວດກາ ການຂຸດຄົ້ນ, ການເສຍພັນທະໃຫ້ລັດ, ການປຸງແຕ່ງ, ການຈໍາໜ່າຍ ຮອດການສົ່ງອອກ ເຄື່ອງປ່າຂອງດົງ ເພື່ອຮັບປະກັນ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດ;

9. ມອບໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ, ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ ແລະ ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງກະສິກໍາ ແລະ ປ່າໄມ້ ຮັບຊາບ ເປັນແຕ່ລະໄລຍະ ເພື່ອພິຈາລະນາແກ້ໄຂ ໃຫ້ທັນກັບສະພາບການ;

10. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ໑໕

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ

**ບ່ອນນໍາສົ່ງ:**

1. ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ 01 ສະບັບ (ເພື່ອລາຍງານ);
2. ກະຊວງສາທາລະນະສຸກ 01 ສະບັບ (ເພື່ອຮັບຊາບ);
3. ຫ້ອງວ່າການແຂວງ, ນະຄອນຫຼວງ ປ່ອນລະ 01 ສະບັບ (ເພື່ອຊ່ວຍຊີ້ນໍາ);
4. ເກັບຮັກສາໄວ້ 01 ສະບັບ.